# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ກໍຣະກົດ 2007 (22-1-2007)

## <u>ແບ່ງປັນເຣື່ອງພຣະຄຣິດທຸກໆ ບ່ອນ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ( ກຈກ. 13: 1-3; 14: 1-7, 21-23 )

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າໄດ້ເອີ້ນໂບດທີ່ຢູ່ໃນຂອບເຂດໃກ້ຄຽງໃຫ້ມີສ່ວນຮ່ວມໃນການຊ່ວຍເຫຼືອອູ້ມຊູໂບດທີ່ຫາກໍເລີ້ມເກີດໃຫມ່ແລະການຈະເຣີນເຕີບໂຕຂອງໂບດເຫຼົ່ານັ້ນ.

**<u>ຄຳຖາມຊີວິດ:</u>** ແມ່ນຫຍັງຄືສິ່ງທີ່ພຣະເຈົ້າຊົງຕ້ອງການໃຫ້ເຮົາເຮັດກັບເຣື່ອງຂ່າວປະເສີດ?

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍໃຫ້ທ່ານໃຫ້ເຮັດພາກສ່ວນຂອງທ່ານເພື່ອໃຫ້ໂບດເປັນໄປຕາມພຣະປະສົງຂອງພຣະເຈົ້າໂດຍ...

* ຄົ້ນຫາສະຖານທີ່ຫລາຍໆ ບ່ອນ, ທັງຢູ່ໃນເຂດອ້ອມແອ້ມໃກ້ຄຽງແລະໃນທົ່ວທຸກທີນແຫ່ງໃນໂລກ, ທີ່ຕ້ອງການຂ່າວປະເສີດແລະຫລາຍໆ ໂບດຈະໄດ້ເລີ້ມຕັ້ງຂຶ້ນ.
* ອະທິຖານດ້ວຍຄວາມເຊື່ອຫມັ້ນແລະຊອກຫາວ່າສະຖານທີ່ໃດທີ່ທ່ານຈະສາມາດມີສ່ວນຮ່ວມໃນການປະກາດຮ່ວມກັນກັບກອງປະກາດແລະການວາແຜນສ້າງໂບດຂຶ້ນໄດ້ໃຫ້ຫລາຍໆແຫ່ງ.

### <u>ສຶກສາພຣະຄັມພີ</u>

ໂບດ First Baptist ຂອງເມືອງ Princeton, ຣັດ Missouri, ໄດ້ພາກັນຕັດສິນໃຈທີ່ຈະຄົ້ນຄ້ວາວ່າຈະເປັນໄປໄດ້ບໍ່ໃນການເລີ້ມສ້າງໂບດໃຫມ່ອີກແຫ່ງນຶ່ງຢູ່ໃນເມືອງນີ້ຊຶ່ງຫ່າງໄກຈາກທີ່ເດີມ 13 ໄມ. ມີການເຫັນພ້ອມໃນທີ່ປະຊຸມແລະນຳຮ່າງທີ່ວາງແຜນໄວ້ແລ້ວມາສເນີ. ມີບາງຄົນຖາມວ່າ " ພວກເຮົາຈຳເປັນບໍ່ທີ່ຈະຕ້ອງສ້າງໂບດໃຫມ່ອີກໂບດນຶ່ງບໍ່?" ໃນເມືອງນ້ອຍໆ ທີ່ເຮົາຢູ່ນີ້ກໍມີອີກສອງໂບດແລ້ວ. ແຕ່ຂອບພຣະຄຸນ, ຜູ້ທີ່ໃຫ້ການສນັບສນູນບໍ່ໄດ້ມີຄວາມທໍ້ຖອຍໃຈ. ພວກເຂົາເລີ້ມກອງປະກາດແລະກໍໄດ້ເຫັນຫມາກຜົນຄືມີສະມາຊິກໃຫມ່ເພີ້ມຂຶ້ນ95 ຄົນໃນລະຫວ່າງປີແລກ. ຂ້າພຣະເຈົ້າກໍໄດ້ຮັບໃຊ້ເປັນສິດຍາພິບານເຕັມເວລາຢູ່ໃນໂບດແຫ່ງນີ້ໃນເວລາຕໍ່ມາ. ມັນເປັນການວາງຮາກຖານເທິງຫີນສີລາທີ່ຫມັ້ນຄົງ ແລະການປະກາດຂອງຂ້າພະເຈົ້າກໍມີສ່ວນຊ່ວຍຊຸກຍູ້ອີກທັງສອງໂບດດ້ວຍ. ມັນເປັນການສຳຄັນແທ້ບໍ່ທີ່ຈະຕ້ອງສ້າງໂບດໃຫມ່ຂຶ້ນມາຕື່ມອີກ? ໂອກາດໃນການຮັບໃຊ້ມີຢູ່ໃນຊີວິດຂອງຜູ້ທີ່ເຊື່ອທັງຫມົດບໍ່? ບົດຮຽນບົດນີ້ຈະຊ່ວຍຕອບຄຳຖາມເຫລົ່ານີ້.

### 1. <u>ຈົ່ງໄປ</u> ( ກຈກ. 13: 1-3 )

ໂບດທີ່ເມືອງອັນຕີໂອເຊັຽໄດ້ມີການປະກາດໃນເຣື່ອງພຣະຄຳພຣະເຈົ້າຢ່າງຈິງຈັງອອກໄປສູ່ຄົນທົ່ວໂລກ, ຊື່ຂອງແຕ່ລະຄົນທີ່ໄດ້ແນະນຳພິເສດໃນຂໍ້ 1 ນັ້ນກໍປຽບເຫມືອນເປັນຄຳສັນຍາທີ່ຈະເປັນຫລັກທີ່ກວ້າງຂວາງໃນເຣື່ອງການເຜີຍແຜ່ຂ່າວປະເສີດອອກໄປ. ພວກຜູ້ນຳເຫລົ່ານີ້ແມ່ນມາຈາກຖິ່ນຖານທີ່ແຕກຕ່າງກັນ. ຊີໂມນເປັນຄົນຍິວແຕ່ມີຊື່ເປັນຂອງຄົນໂຣມ, ຊຶ່ງໄດ້ກ່າວເຖິງເພິ່ນວ່າໄດ້ຍົກຍ້າຍອອນໄປໃນກຸງໂຣມມາແລ້ວ. ລູກີໂອໄທເມືອງກີເຣເນທີ່ມາຈາກທາງພາກເຫນືອຂອງອັຟຣິກາ. ແລະແນ່ນອນທັງຜູ້ປະກາດແລະຄຣູສອນຈຳນວນຫ້າທ່ານທີ່ໄດ້ບອກໄວ້ໃນຂໍ້ 1-3, ມີສີ່ຄົນທີ່ເປັນຄົນຍິວທີ່ເກີດຢູ່ນອກຢູເດັຍ. ມານາເອນເປັນຜູ້ດຽວຖືກຍອມຮັບ. ແຕ່ລະທ່ານແມ່ນມີຄວາມສາມາດພິເສດໃນການທີ່ຈະເຂົ້າກັບພວກຄົນຕ່າງຊາດແລະບາງທີອາດຈະເວົ້າພາສາກຣີກ, ຊຶ່ງເປັນພາສາສາກົນທີ່ໃຊ້ໃນ

ການສື່ສານແລະຄ້າຂາຍໃນເວລານັ້ນ. ພວກເພິ່ນໄດ້ອອກໄປທຳພາຣະກິດໃນການປະກາດນີ້ຄືແບ່ງກັນອອກໄປຕິດຕໍ່ກັບຄົນຕ່າງຊົນຊັ້ນ, ຕ່າງຖານະ, ໂດຍຂ້າມສິ່ງກີດກັ້ນຄືເຣື່ອງຜິວພັນ, ແລະມີຜົນທີ່ສະທ້ອນໄປເຖິງຄວາມແຕກຕ່າງໃນເຣື່ອງປະເພນີວັທນະທັມດ້ວຍ.

ໂບດທີ່ເມືອງອັນຕີໂອເຂັຽແມ່ນເປັນນ້ຳນຶ່ງໃຈດຽວກັນ, ຮັບໃຊ້ພຣະຜູ້ເປັນເຈົ້າອົງດຽວກັນແລະເຮັດຕາມທີ່ທຸກຄົນເຫັນພ້ອມ. ພວກທີ່ເຊື່ອແມ່ນໄດ້ມີການປະກາດໃຫ້ແກ່ອົງພຣະຜູ້ເປັນເຈົ້າ. ພຣະຄຳທີ່ປະກາດແມ່ນມີຄວາມມຸ້ງຫວັງແລະໃຫ້ຄວາມເຂົ້າໃຈເຖິງການຮັບໃຊ້ຜູ້ອື່ນແຕ່ຈະໃຊ້ຈ່າຍຊັບສິນຂອງຕົນເອງ. ເພາະງານຮັບໃຊ້ໃນການປະກາດນີ້ຈະບໍ່ໄດ້ເຮັດໃຫ້ຜູ້ນຶ່ງຜູ້ໃດມີແນວຄິດຫາກຳໄລວ່າຈະໄດ້ເທົ່າໃດເປັນຄ່າຕອບແທນ. ພວກເຮົາເອງກໍເຊັ່ນດຽວກັນຈຶ່ງຄິດສເມີວ່າຈະໃຊ້ຜູ້ອື່ນແບບໃດຈຶ່ງຈະດີທີ່ສຸດ. ວິທີທາງທີ່ຈະຮັບໃຊ້ນັ້ນກໍແມ່ນທາງຂອງພຣະອາຈານ(ພຣະເຢຊູ).

ຜູ້ທີ່ມີຄວາມເຊື່ອເຫລົ່ານີ້ໄດ້ຖືກແຕ່ງຕັ້ງຈາກຜູ້ທີ່ພວກເຂົາຮັບໃຊ້ບໍ່ພຽງແຕ່ດ້ວຍຄວາມບໍຣິສຸດໃຈ ແຕ່ໄດ້ຮູ້ຈັກກັບພຣະອົງແລະຕາມພຣະປະສົງຂອງພຣະອົງອີກດ້ວຍ. ພວກເພິ່ນໄດ້ມີການຖືສິນອົດອາຫານແລະອະທິຖານ. ຄຣິສຕຽນລຸ້ນແລກເມື່ອເຂົາເຈົ້າພາກັນຖືສິນອົດອາຫານ ເພື່ອທີ່ຈະໄດ້ໃກ້ຊິດກັບພຣະເຈົ້າຕາມຄວາມຕ້ອງການຂອງເນື້ອກາຍຂອງເຂົາເຈົ້າ. ຄຣິສຕຽນທັງຫລາຍໃນປັດຈບັນນີ້ໄດ້ເຫັນວ່າການຖືສິນອົດອາຫານກໍຖືວ່າໄດ້ໃກ້ຊິດກັບພຣະເຈົ້າເຊັ່ນດຽວກັນ. ເມື່ອພວກເຮົາໃກ້ຊິດກັບພຣະເຈົ້າແລະພຣະອົງກໍຈະຢູ່ໃກ້ຊິດກັບພວກເຮົາເຊັ່ນດຽວກັນ ( ຢກບ. 4:8 ).

ເມື່ອກຸ່ມຄຣິສຕຽນຫາກຮັບໃຊ້ຄົນ " ຂ້າງນອກ " ເພື່ອຊອກຫາພຣະປະສົງຂອງພຣະເຈົ້າຮ່ວມກັນ, ພຣະເຈົ້າຈະຊົງອວຍພຣະພອນພວກເຂົາ. ຖ້າພວກເຮົາບໍ່ມີຄວາມລະມັດລະວັງ, ສະນັ້ນ, ເມື່ອເຮົາວາງແຜນການແລ້ວຮ້ອງຂໍພຣະພອນຈາກພຣະເຈົ້າ. ເຮົາຄວນຈະໃຫ້ຊີວິດເປັນທີ່ປະທັບຂອງພຣະເຈົ້າແລະໃຫ້ພຣະອົງຊົງເປັນພຣະອາຈານ. ນີ້ຈະເປັນໂອກາດໂປໂລແລະບານາບັສໄດ້ຄົ້ນພົບພຣະວິນຍານບໍຣິສຸດເປັນຜູ້ຊົງເລືອກເອົາພວກເພິ່ນໃຫ້ເຮັດວຽກງານພິເສດນີ້. ໃນການເຊື່ອຟັງທີ່ພຣະເຈົ້າຊົງເອີ້ນ, ພວກເພິ່ນໄດ້ຖືສິນອົດອາຫານ, ອະທິຖານແລະທາງຄຣິສຕະຈັກກໍໄດ້ວາງມື, ເພື່ອແຈ້ງເປັນພິເສດໃຫ້ເປັນຜູ້ຮັບໃຊ້. ໂດຍບໍ່ໄດ້ມີຄວາມເຫັນແກ່ຕົວ, ພວກເພິ່ນໄດ້ສົ່ງຜູ້ຮັບໃຊ້ທັງສອງອອກໄປປ່າວປະກາດຂ່າວປະເສີດກັບພວກທີ່ຫລົງຫາຍ.

## ໒. <u>ການປ່າວປະກາດ</u> ( ກຈກ. 14:1-7 )

ດ້ວຍຄວາມສັດຊື່ຂອງໂປໂລແລະບາຣະນາບາໄດ້ອອກໄປປະກາດໃນສະຖານທີ່ໃຫມ່ໆ . ເຖິງຢ່າງໃດ, ການປະກາດກໍບໍ່ພົ້ນການຕໍ່ຕ້ານ. ພວກທີ່ບໍ່ຍອມເຊື່ອກໍໄດ້ຍົວະຍົງແລະດູຖູກທີ່ເມືອງໄຊຣັສ. ຄົນຈຳພວກນີ້ຕໍ່ຕ້ານທີ່ຈະໄດ້ຍິນຂ່າວປະເສີດ. ການລົງໂທດຂອງພຣະເຈົ້າໄດ້ຕົກໃສ່ພວກເຂົາແລະກາຍເປັນຄົນຕາບອດ ( ກຈກ. 13: 4-13 ). ໃນຂໍ້ 9, ທີ່ໂຊໂລໄດ້ຖືກເອີ້ນຊື່ວ່າເປັນໂປໂລ.

ທີ່ປີຊີເດັຍ( ປັດຈຸບັນນີ້ເປັນປະເທດ ເຕີກີ ), ໂປໂລໄດ້ອະທິບາຍວ່າພຣະເຈົ້າໄດ້ກະທຳພາຣະກິດໃນປະຫວັດສາດໂດຍສົ່ງພຣະເຢຊູຄຣິດມາ. ພຣະເຈົ້າທຳສິ່ງອັສຈັນໃນຊີວິດຂອງພຣະເຢຊູໂດຍການເກີດ, ການສິ້ນພຣະຊົນ, ແລະການຄືນພຣະຊົນ. ໂປໂລໄດ້ມີຄວາມຊົມຊື່ນຍິນດີດ້ວຍການປະກາດ " ເຖິງເຣື່ອງການຍົກໂທດຄວາມຜິດບາບແກ່ພວກເຂົາເຈົ້າ "( ກຈກ. ຂໍ້ 38 ). ຜູ້ປະກາດພຣະທັມໄດ້ຕັກເຕືອນເຖິງອັນຕະລາຍໃນການປະຂ່າວປະເສີດ.

ເມື່ອປະຊາຊົນໄດ້ຮວມກັນມາຟັງໂປໂລແລະບາຣະນາບາປະກາດພຣະທັມ, ແລະກໍມີຜູ້ຮັບເຊື່ອຫຼາຍຄົນ, ຝ່າຍຄົນຢິວກໍເກີດມີການອິດສາ " ກໍ່ການຫວຸ້ນວາຍແລະຂົ່ມເຫັງ " ( ກຈກ. 13: 50 ). ທ່ານທັງສອງມີອຸປນິສັຍທີ່ຈະເລີ້ມເທສນາທີ່ໂຮງທັມແລະພວກຊາວຢິວກໍຍັງມີການຕໍ່ຕ້ານກັບການປະກາດຂອງພວກເພິ່ນຢູ່.

ໃນເມືອງອີໂກນີອົນ, ພວກເຮົາໄດ້ເຫັນການວາງແຜນການປ່າວປະກາດຂອງໂປໂລແລະບາຣະນາບາໄດ້ເຂົ້າໄປໃນເມືອງນີ້. ພວກເພິ່ນໄດ້ປະກາດແກ່ຊາວຢິວໃນໂຮງທັມ. ໃນຂະນະທີ່ນັ້ນມີຄົນຢິວແລະຊາວກຣີກຈຳນວນຫລວງຫລາຍກໍໄດ້ຮັບເຊື່ອຂ່າວປະເສີດ, ມີພວກຢິວຈຳນວນຫນຶ່ງໄດ້ຕໍ່ຕ້ານແລະໄດ້ຍົວະຍົງຄົນຕ່າງຊາດໃຫ້ຄິດປອງຮ້າຍຕໍ່ພວກພີ່ນ້ອງ. ການປະກາດຂອງໂປໂລແລະບາຣະນາບາພຣະເຈົ້າໄດ້ຊົງໂຜດໃຫ້ທ່ານທັງສອງເຮັດຫມາຍສຳຄັນແລະ

ການອັສຈັນໄດ້. ແຕ່ພວກທີ່ຕໍ່ຕ້ານກໍຍິ່ງເພີ່ມທະວີຂື້ນແລະເປັນອັນຕະລາຍຕໍ່ຊີວິດຂອງພວກເພິ່ນ, ໂດຍຖືກຂົ່ມຂູ່ໃຫ້ອອກຈາກເມືອງນີ້. ເຖິງຢ່າງໃດກໍດີ, ພວກເພິ່ນກໍຍັງຄົງໄດ້ປະກາດໃນທີ່ອື່ນໆ . ພວກເຮົາຄວນຈື່ຈຳໄວ້ວ່າເມື່ອເວລາພວກເຮົາແບ່ງປັນຂ່າວປະເສີດ, ພວກເຮົາຈະພົບກັບຄົນສອງຈຳພວກ: ເຊັ່ນພວກທີ່ຍອມຮັບແລະອີກພວກນຶ່ງທີ່ປະຕິເສດ. ການປ່າວປະກາດເປັນສິ່ງສຳຄັນ, ເຖິງຢ່າງໃດກໍດີ, ຈະເປັນການຕໍ່ຕ້ານຫລືການເຮັດໃຫ້ພວກເຮົາທໍ້ແທ້ໃຈທີ່ຈະແບ່ງປັນຂ່າວປະເສີດທີ່ສາມາດທີ່ຈະໃຫ້ຄົນອື່ນໄດ້ຮັບຊີວິດນິຣັນ. ພວກເຮົາຄວນສຸມຈິດໃຈໃສ່ສິ່ງສຳຄັນຄືຂ່າວປະເສີດແທນທີ່ຈະເປັນການປະຕິເສດໃນສິ່ງທີ່ຈະເກີດຂື້ນ.

ຄວາມຢ້ານຈາກການປະຕິເສດອາດຈະເປັນບັນຫາໃຫຍ່ວ່າເປັນຫຍັງຄົນຈຶ່ງບໍ່ຢາກປະກາດ. ເຮັດແນວໃດພວກເຮົາຈະເອົາຊະນະຕໍ່ຄວາມຢ້ານກົວນີ້ໄດ້? ເຊື່ອວ່າພຣະວິນຍານບໍຣິສຸດຈະເປັນຜູ້ຊ່ວຍໃຫ້ພວກເຮົາຮູ້ຈັກເວົ້າແລະວິທີເວົ້າແລະເຖິງແມ້ວ່າຄົນຈະປະຕິເສດພວກເຮົາກໍຕາມ. ແຕ່ກໍເປັນກຳລັງໃຈສ່ວນນຶ່ງ. ພຣະວິນຍານບໍຣິສຸດສາມາດຊ່ວຍພວກເຮົາປະກາດທຸກເວລາທີ່ພວກເຮົາໃຫ້ພຣະວິນຍານຊົງນຳຄົນມາຫາພຣະຄຣິດ. ພວກເຮົາສາມາດທວງພຣະສັນຍາທີ່ພຣະອົງສັນຍາໄວ້ກັບພວກເຮົາ ( ມທ. 28: 20 ).

ຄືກັນກັບໂປໂລແລະບາຣະນາບາ, ພວກເຮົາຄວນຈະໄປທຸກໆ ບ່ອນທີ່ຄົນຈະຍອມຮັບຫລືບໍ່ຍອມຮັບ, ແຕ່ພວກເຮົາຈະຕ້ອງອອກໄປເລື້ອຍໆ . ບາງຄົນອາດຈະຍອມຮັບ, ແລະຈະໄດ້ຮັບຊີວິດນິຣັນຖ້າພວກເຮົາຫາກບໍ່ທໍ້ຖອຍ.

## 3. <u>ເຂັ້ມແຂງຂື້ນ.</u> ( ກຈກ 14: 21-23 )

ວຽກງານການຮັບໃຊ້ຍິ່ງກວ່າການປະກາດແລະຕັ້ງໂບດ; ຄວນຈະເປັນການຊ່ວຍໃຫ້ໂບດທີ່ມີຢູ່ແລ້ວເຂັ້ມແຂງຂື້ນ ( ໂດຍການສ້າງສາວົກ ). ໂປໂລແລະບາຣະນາບາກັບຄືນໄປເມືອງທີ່ພວກເພິ່ນຖືກໄລ່ໜີເພື່ອຊ່ວຍໜູນໃຈພວກພີ່ນ້ອງຄຣິສຕຽນ. ທ່ານທັງສອງມີສິດສົມຄວນທີ່ຈະໄດ້ຍິນເຣື່ອງການຂົ່ມເຫງນີ້. ພວກເພິ່ນຮູ້ວິທີທີ່ຈະດຳເນີນຕໍ່ໄປໃນຄວາມເຊື່ອເຖິງແມ່ນວ່າຈະມີການກີດກັ້ນກໍຕາມ.

ໃຊ້ເວລາກັບຄົນທີ່ເຊື່ອໃໝ່,ໃນຂະນະທີ່ພວກເຮົາກຳລັງແບ່ງປັນຂ່າວປະເສີດກັບຄົນທົ່ວໄປ, ຂໍ້ສຳຄັນຄື, ພວກເຮົາຄວນຈະລະມັດລະວັງເພື່ອບໍ່ໃຫ້ຜູ້ທີ່ເຊື່ອໃໝ່ຄິດວ່າເມື່ອເວລາໄດ້ຮັບພຣະຄຣິດແລ້ວວ່າເຂົາຈະບໍ່ມີບັນຫາອີກ.

ຜູ້ທີ່ເຊື່ອໃໝ່ຕ້ອງການຮູ້ກ່ຽວກັບຊີວິດຄຣິສຕຽນຊຶ່ງບໍ່ແມ່ນການງ່າຍ. ມັນເປັນສ່ວນໜຶ່ງຂອງການເປັນຄຣິສຕຽນອາດຈະມີຄວາມລຳບາກທີ່ເຂົາອາດຈະໄດ້ພົບພໍ້, ພວກເຮົາສາມາດໃຫ້ເຂົາເຈົ້າໄດ້ເຂົ້າໃຈເຖິງພຣະຄຸນ, ພະລັງແລະຄວາມເມດຕາຈາກພຣະເຈົ້າໃນຂະນະທີ່ຕົກຢູ່ໃນຄວາມລຳບາກນັ້ນພວກເຮົາຄວນຈະເພິ່ງພຣະເຈົ້າ.

ຄຣິສຕຽນຄົນອື່ນໆ ໄດ້ພົບການໜູນໃຈແລະຮູ້ວ່າບໍ່ແມ່ນເຂົາຜູ້ດຽວທີ່ໄດ້ຮັບຄວາມຫຍຸ້ງຍາກໃນເຣື່ອງຄວາມເຊື່ອ. ໂດຍການໄດ້ຍິນຄຳພະຍານໃໝ່ໆ, ຂອງວິທີໃດທີ່ພຣະເຈົ້າໄດ້ຊົງປະທານພຣະຄຸນໃຫ້ເຂົາມີຄວາມສາມາດແກ້ໄຂບັນຫາຫຍຸ້ງຍາກໃນຊີວິດ! ສອງຢ່າງນີ້ຈະຊ່ວຍໃຫ້ເຂົາເກີດມີຄວາມເຂັ້ມແຂງແລະໜູນໃຈຄົນອື່ນໆ ໄດ້.

ໃນການດູແລຄຣິສຈັກໃໝ່ ໆ, ໂປໂລແລະບາຣະນາບາໄດ້ແຕ່ງຕັ້ງເຖົ້າແກ່ເປັນຜູ້ດູແລຄຣິສຕະຈັກ. ພວກເຖົ້າແກ່ຈະເປັນຜູ້ອາວຸໂສທີ່ຄົນທັງຫລາຍໃນຄຣິສຕະຈັກນັບຖື, ເຂົາເຈົ້າຈະເປັນຜູ້ຊ່ວຍຄຣິສຕຽນໃໝ່ໃນການສິດສອນແລະການປົກຄອງ. ໂປໂລແລະບາຣະນາບາໄດ້ຕິດຕາມການປະຕິບັດຂອງພວກຢິວໃນໂຮງທັມຊຶ່ງນະທີ່ນັ້ນພວກຜູ້ນຳທີ່ຖືກແຕ່ງຕັ້ງໃຫ້ດູແລຄຣິສຕະຈັກ. ພວກຄຣິສຕຽນໃໝ່ຈຶ່ງບໍ່ໄດ້ປະປ່ອຍ " ໂດຍບໍ່ມີຜູ້ນຳ " ທາງຝ່າຍຈິດວິນຍານ.

ໂປໂລແລະບາຣະນາບາໄດ້ອະທິຖານ ແລະອົດອາຫານເພື່ອພວກຜູ້ນຳໃໝ່ແລະມອບພວກເຂົາໄວ້ກັບພຣະເຈົ້າ. ເມື່ອເວລາພວກເຮົາອະທິຖານເພື່ອຜູ້ນຳຂອງເຮົາ, ພວກເພິ່ນຈະໄດ້ຮັບພະລັງ. ພວກເຮົາຄວນຈະນັບຖືຜູ້ທີ່ນຳພາພວກເຮົາ " ຈົ່ງນັບຖືແລະຮັກເຂົາຢ່າງຫລາຍທີ່ສຸດເພາະເນື່ອງດ້ວຍການງານຂອງເຂົານັ້ນ " ເພາະເພິ່ນກໍໄດ້ຮັບການຕິຕຽນຫລາຍສົມຄວນແລ້ວ. ພວກຜູ້ນຳຕ້ອງການການໜູນໃຈຈາກພວກເຮົາເຊັ່ນກັນ.

ອະທິຖານເພື່ອຜູ້ນຳເປັນສິ່ງທີ່ທຸກຄົນຈຳເປັນຕ້ອງເຮັດ. ເມື່ອເວລາພວກເຮົາອະທິຖານຄວນຈະບອກໃຫ້ເພິ່ນໄດ້ຮູ້ວ່າພວກເຮົາໄດ້ອະທິຖານເພື່ອພວກເພິ່ນເປັນປະຈຳ, ພວກເຮົາຈະເປັນແຫລ່ງຂອງຄວາມໜູນໃຈໃຫ້ເພິ່ນ.

## ບົດຮຽນຊີວິດ

ທາງຄຣິສຕະຈັກໄດ້ແຕ່ງຕັ້ງໂປໂລແລະບາຣະນາບາອອກໄປຮັບໃຊ້ຕາມທີ່ພຣະເຈົ້າຊົງເອີ້ນຄືໄປປະກາດຂ່າວປະເສີດ, ເຖິງຈະເປັນບ່ອນທີ່ໄກແລະມີຄົນທີ່ບໍ່ຮູ້ຈັກ. ໂປໂລແລະບາຣະນາບາມີຄວາມສັດຊື່ຕໍ່ພຣະເຈົ້າຊົງເອີ້ນ, ເຖິງແມ່ນວ່າຈະມີການຕໍ່ຕ້ານຈາກພວກທີ່ບໍ່ເຊື່ອທັງຫລາຍກໍຕາມ. ພວກເຮົາຄວນຈະເຮັດວຽກສອງຢ່າງນີ້ໂດຍທາງສ່ວນຕົວຫລືໂດຍທາງອົງການກັບຜູ້ເຊື່ອທັງຫລາຍ. ພຣະເຈົ້າໄດ້ເອີ້ນຄຣິສຕະຈັກທັງຫລາຍໃຫ້ມີສ່ວນໃນການກໍ່ສ້າງໂບດໃຫມ່ ແລະໂບດທີ່ມີຢູ່ແລ້ວ. ວັນນີ້ພຣະເຈົ້າໄດ້ເອີ້ນໃຫ້ຜູ້ທີ່ເຊື່ອທັງຫລາຍໃຫ້ທຳງານຮ່ວມກັບພຣະອົງ. ພວກເຮົາຈະເຮັດວິທີໃດ?

- ດ້ວຍການອະທິຖານ
- ການອອກໄປ
- ການຖວາຍ
- ການສ້າງສາວົກຜູ້ອື່ນ ຄືຜູ້ທີ່ຈະອະທິຖານ, ຖວາຍ ແລະອອກໄປ

( ອຸປຖັມໂດຍ ລາວຊາວເທີນແບັບຕິສສັມພັນ www.lsbf.org - ແປແລະຮຽບຮຽງໂດຍ ອຣ )